# ຄໍາຂໍຮັບເອົາຂໍ້ມູນຂອງ MEDI-CAL (MEDI-CAL REQUEST FOR INFORMATION)

ວັນທີແຈ້ງການ:
ໝາຍເລກກໍລະນີ:
ຊື່ພະນັກງານ:
ໝາຍເລກ ID ພະນັກງານ:
ເບີແຟັກຂອງພະນັກງານ:
ເບີໂທລະສັບຂອງພະນັກງານ:
ຊົ່ວໂມງເຮັດວຽກ:
ແຈ້ງການສໍາລັບ:

## ຂໍ້ຄວນເອົາໃຈໃສ່: ອ່ານໜ້ານີ້ກ່ອນ

ພວກເຮົາຕ້ອງການຂໍ້ມູນເພີ່ມເຕີມຈາກທ່ານ ເພື່ອເຮັດສໍາເລັດການທົບທວນຂອງພວກເຮົາກ່ຽວກັບການມີສິດໄດ້ຮັບ Medi-Cal ຂອງທ່ານ. ກ່ອນທີ່ພວກເຮົາຂໍເອົາຂໍ້ມູນຈາກທ່ານ, ພວກເຮົາໄດ້ເບິ່ງບັນທຶກຂອງພວກເຮົາ ແລະ ຂໍ້ມູນອື່ນໆທັງໝົດທີ່ມີໃຫ້ແກ່ພວກເຮົາແລ້ວ. ການສຶກສາຄົ້ນຄວ້າຂອງພວກເຮົາບໍ່ໄດ້ໃຫ້ຂໍ້ມູນທັງໝົດທີ່ຕ້ອງການ. ພວກເຮົາຍັງຕ້ອງການຂໍ້ມູນບ່ອນມີຊ່ອງທີ່ໝາຍຕິກໃສ່ຢູ່ໃນໜ້າຕໍ່ໄປນີ້.

**ພວກເຮົາຕ້ອງໄດ້ຮັບຂໍ້ມູນນີ້ພາຍໃນວັນທີ ຫຼື ທ່ານອາດສູນເສຍສິດທິປະໂຫຍດ Medi-Cal ຂອງທ່ານ!**

- ໃຊ້ແບບຟອມນີ້ເພື່ອຊ່ວຍຮວບຮວມເອກະສານ ຫຼື ຂໍ້ມູນທີ່ຕ້ອງການ.
- ທ່ານບໍ່ຈໍາເປັນຕ້ອງສົ່ງຄືນແບບຟອມນີ້ໃຫ້ພວກເຮົາ.
- ທ່ານອາດຈະໃຫ້ຂໍ້ມູນແກ່ພວກເຮົາທາງໄປສະນີ, ແຟັກ, ໂທລະສັບ, ດ້ວຍຕົວເອງ, ຫຼື ທາງອອນລາຍ. ຕິດຕໍ່ເຂດປົກຄອງຂອງທ່ານ ເພື່ອຊອກຮູ້ວິທີການສົ່ງຂໍ້ມູນຂອງທ່ານທາງອອນລາຍ.
- ມີຊອງຈົດໝາຍແບບຈ່າໜ້າຊອງເຖິງຕົວເອງທີ່ຈ່າຍຄ່າໄປສະນີລ່ວງໜ້າໃຫ້ທ່ານ ເພື່ອໃຫ້ທ່ານສົ່ງຄືນເອກະສານ ຫຼື ຂໍ້ມູນທີ່ຂໍ.
- ກະລຸນາຂຽນໝາຍເລກກໍລະນີທີ່ລະບຸໄວ້ຢູ່ດ້ານເທິງຂອງໜ້ານີ້ໃສ່ໃນເອກະສານໃດໜຶ່ງທີ່ທ່ານສົ່ງໃຫ້ພວກເຮົາ.
- ຖ້າທ່ານມີຄໍາຖາມ, ຕ້ອງການຂໍ້ມູນເພີ່ມເຕີມ, ຫຼື ບໍ່ສາມາດໃຫ້ຂໍ້ມູນທີ່ຂໍໄດ້ ກະລຸນາຕິດຕໍ່ຫາພວກເຮົາ ຕາມເບີໂທລະສັບທີ່ລະບຸໄວ້ຢູ່ດ້ານເທິງຂອງໜ້ານີ້.

# ສິ່ງສຳຄັນ! ກະລຸນາອ່ານທຸກໜ້າຂອງແບບຟອມສະບັບນີ້

**ຊ່ວຍພວກເຮົາຕິດຕໍ່ກັບທ່ານ!**

**ໂທຫາພະນັກງານຝ່າຍການມີສິດຂອງທ່ານ ຖ້າທ່ານມີການປ່ຽນແປງທີ່ຢູ່ ຫຼື ເບີໂທລະສັບ.**
**(ຂໍ້ມູນຕິດຕໍ່ຂອງພະນັກງານລະບຸໄວ້ຢູ່ດ້ານເທິງຂອງໜ້ານີ້)**

## ຄຳຂໍເອົາຂໍ້ມູນຂອງ MEDI-CAL (MEDI-CAL REQUEST FOR INFORMATION)

*ໝາຍເຫດ: ພວກເຮົາຕ້ອງການ**ພຽງແຕ່**ຂໍ້ມູນບ່ອນທີ່ມີການໝາຍຕິກໃສ່ຊ່ອງເທົ່ານັ້ນ.*

### ລາຍຮັບ

ຂໍ້ມູນລາຍຮັບຂອງທ່ານຈະຊ່ວຍພວກເຮົາຕັດສິນ ວ່າທ່ານມີສິດໄດ້ຮັບ Medi-Cal ແບບຟຣີ ຫຼື ຕົ້ນທຶນຕໍ່າ ຫຼື ການຊ່ວຍເຫຼືອຈາກ Covered California, ການແລກປ່ຽນສິດທິປະໂຫຍດດ້ານສຸຂະພາບຂອງລັດ.

- ☐ ສຳເນົາຂອງສັ້ນໃບຮັບເງິນເດືອນຫຼ້າສຸດ ຫຼື ຄຳຖະແຫຼງການຈາກນາຍຈ້າງຂອງທ່ານກ່ຽວກັບວຽກຂອງທ່ານ (ທ່ານໄດ້ຮັບເງິນກ່ອນຫັກອາກອນຫຼາຍເທົ່າໃດ, ທ່ານໄດ້ຮັບເງິນເລື້ອຍໆສ່ຳໃດ, ທ່ານເຮັດວຽກຈັກຊົ່ວໂມງ) ສຳລັບແຕ່ລະວຽກຂອງທ່ານ (ຖ້າທ່ານມີຫຼາຍກວ່າໜຶ່ງວຽກ) ສຳລັບ:

  ຖ້າທ່ານບໍ່ໄດ້ຮັບສັ້ນໃບຮັບເງິນເດືອນ ແລະ ບໍ່ສາມາດຮັບຄຳຖະແຫຼງການຈາກນາຍຈ້າງຂອງທ່ານໄດ້, ທ່ານສາມາດເຮັດສິ່ງໜຶ່ງຕໍ່ໄປນີ້:

  - ໃຫ້ສຳເນົາໃບແຈ້ງເສຍອາກອນຫຼ້າສຸດຂອງທ່ານແກ່ພວກເຮົາສຳລັບ:
  - ຕິດຕໍ່ພະນັກງານຂອງທ່ານເພື່ອເຮັດສຳເລັດຄຳຖະແຫຼງການປະຕິຍານທີ່ລົງລາຍເຊັນພາຍໃຕ້ການລົງໂທດໃນຄວາມຜິດຖານຕົວະ ແລະ ລົງວັນທີໂດຍທ່ານ ກ່ຽວກັບທ່ານໄດ້ຮັບເງິນກ່ອນຫັກອາກອນຫຼາຍເທົ່າໃດ, ທ່ານໄດ້ຮັບເງິນເລື້ອຍໆສ່ຳໃດ, ທ່ານເຮັດວຽກຈັກຊົ່ວໂມງ.

- ☐ ຖ້າທຸລະກິດສ່ວນຕົວ, ສຳເນົາຂອງ Schedule C ຂອງໃບແຈ້ງເສຍອາກອນຫຼ້າສຸດ, **ຫຼື** ໃບແຈ້ງກຳໄລ ແລະ ການຂາດທຶນໃນຊ່ວງສາມເດືອນທີ່ຜ່ານມາສຳລັບ:

- ☐ ຫຼັກຖານສະແດງການຫວ່າງງານ ຫຼື ສິດທິປະໂຫຍດຄົນພິການ—ສຳເນົາຂອງສັ້ນໃບຮັບສິດທິປະໂຫຍດແບບຈ່າຍເງິນໃຫ້ ຫຼື ໜັງສືທີ່ສະແດງໃຫ້ເຫັນວ່າທ່ານໄດ້ຮັບຫຍັງແດ່ກ່ອນການຫັກຈຳນອນສຳລັບ:

- ☐ ຫຼັກຖານສະແດງສິດທິປະໂຫຍດສຳລັບນັກຮົບເກົ່າ (ຄວາມຊ່ວຍເຫຼືອ ແລະ ການເຂົ້າຮ່ວມ, ຄວາມພິການ ຫຼື ການເຂົ້າບຳນານ) - ສຳເນົາຂອງສັ້ນໃບຮັບສິດທິປະໂຫຍດແບບຈ່າຍເງິນໃຫ້ ຫຼື ໜັງສືແຈ້ງຮັບລາງວັນສຳລັບ:

- ☐ ຫຼັກຖານສະແດງການໄດ້ຮັບສິດທິປະໂຫຍດຈາກການປະກັນສັງຄົມ—ສຳເນົາຂອງສັ້ນໃບຮັບສິດທິປະໂຫຍດແບບຈ່າຍເງິນໃຫ້ ຫຼື ໜັງສືແຈ້ງຮັບລາງວັນສຳລັບ:

- ☐ ຫຼັກຖານສະແດງການໄດ້ຮັບລາຍຮັບຈາກການເຂົ້າບຳນານ ຫຼື ເບ້ຍບຳນານ—ສຳເນົາຂອງສັ້ນໃບຮັບສິດທິປະໂຫຍດ ຫຼື ສັ້ນໃບເຊັກຮັບເງິນສຳລັບ:

☐ ຂໍ້ມູນກ່ຽວກັບສະຖານະການຍື່ນອາກອນຂອງທ່ານ ແລະ/ຫຼື ສະຖານະການຍື່ນອາກອນຂອງສະມາຊິກອື່ນໆໃນຄົວເຮືອນສຳລັບ:

☐ ປະກອບຂໍ້ມູນໃສ່ແບບຟອມຕິດຄັດທີ່ມີຊື່ຫົວຂໍ້ວ່າ "ຄຳຂໍຮັບເອົາຂໍ້ມູນອາກອນຄົວເຮືອນ (Request for Tax Household Information) (RFTHI)" ສຳລັບ:

☐ ອື່ນໆ:

**ການຫັກອອກ**

☐ ສຳເນົາຂອງໃບເຊັກ ຫຼື ໃບຮັບເງິນຄ່າດູແລເບິ່ງແຍງເດັກ, ເງິນຊ່ວຍສະໜັບສະໜູນເດັກ, ເງິນຄ່າລ້ຽງດູ ຫຼື ຄ່າປະກັນສຸຂະພາບທີ່ຈ່າຍໃຫ້ສຳລັບ:

☐ ອື່ນໆ:

**ຂໍ້ມູນກ່ຽວກັບບຸກຄົນທີ່ຂໍ Medi-Cal**

☐ ສຳເນົາຂອງໃບຂັບຂີ່ ຫຼື ບັດປະຈຳຕົວມີຮູບຖ່າຍຕິດຂອງ California ຂອງທ່ານສຳລັບ:

☐ ໝາຍເລກການປະກັນສັງຄົມສຳລັບ:

☐ ສຳເນົາຂອງເອກະສານ ຫຼື ບັດສະແດງການເຂົ້າເມືອງ (ອັດສຳເນົາບັດ ຫຼື ເອກະສານທັງສອງດ້ານ) ສຳລັບ:

ຖ້າທ່ານເປັນຄົນເຂົ້າເມືອງ ແລະ ບໍ່ມີໝາຍເລກການປະກັນສັງຄົມ ຫຼື ເອກະສານສະແດງການເຂົ້າເມືອງໃຫ້ພວກເຮົາ, ທ່ານອາດຈະຍັງຄົງມີສິດໄດ້ຮັບການບໍລິການສຸກເສີນ ແລະ ກ່ຽວຂ້ອງກັບການຖືພາຢູ່. ກະລຸນາໂທຫາພະນັກງານຂອງທ່ານ ເພື່ອບອກໃຫ້ພວກເຮົາຮູ້ເຖິງການປ່ຽນແປງໃດໜຶ່ງຕໍ່ສະຖານະການເຂົ້າເມືອງ/ການເປັນພົນລະເມືອງຂອງທ່ານ ຫຼື ຖ້າທ່ານບໍ່ມີໝາຍເລກການປະກັນສັງຄົມ ຫຼື ເອກະສານສະແດງການເຂົ້າເມືອງ, ເພື່ອໃຫ້ພວກເຮົາສາມາດເຮັດການທົບທວນຂອງພວກເຮົາໃຫ້ສຳເລັດ.

**ອະດີດຊາວໜຸ່ມອຸປະຖຳ**

☐ ສຳເນົາຂອງເອກະສານໃດໜຶ່ງສຳລັບ: ທີ່ສະແດງໃຫ້ເຫັນວ່າທ່ານໄດ້ເຄີຍຢູ່ໃນການດູແລເບິ່ງແຍງອຸປະຖຳໃນວັນເກີດຄົບຮອບ 18 ປີຂອງທ່ານ. ພວກເຮົາກຳລັງຂໍເອົາຂໍ້ມູນນີ້ ເພາະວ່າພວກເຮົາຍັງບໍ່ມີຄວາມສາມາດຮັບຫຼັກຖານທີ່ສະແດງວ່າທ່ານໄດ້ຢູ່ໃນການດູແລເບິ່ງແຍງອຸປະຖຳເມື່ອອາຍຸ 18 ປີຂຶ້ນເມືອ.

ຂໍ້ມູນທີ່ພວກເຮົາກວດສອບສະແດງໃຫ້ເຫັນວ່າ:

**ທີ່ຢູ່ອາໄສ**

☐ ໃບຢືນຢັນທີ່ຢູ່ປະຈຸບັນຂອງທ່ານ (ໃບຄ່າເຊົ່າ, ໃບບິນຄ່າໃຊ້ສອຍ ແລະ ອື່ນໆ)

**ຊັບສິນສ່ວນຕົວ ຫຼື ຕົວຈິງ**

☐ ສຳເນົາຂອງທະບຽນລົດ ຫຼື ໜັງສືຢັ້ງຢືນກຳມະສິດທັງໝົດ (ຖ້າທ່ານມີລົດຫຼາຍກວ່າໜຶ່ງຄັນ) ສຳລັບ:

☐ ສຳເນົາຂອງໃບແຈ້ງຍອດບັນຊີທະນາຄານຫຼ້າສຸດຂອງທ່ານ (ການກວດສອບ, ບັນຊີເງິນຝາກປະຢັດ ແລະ ອື່ນໆ) ສຳລັບ:

☐ ສຳເນົາຂອງໜັງສືປະກັນໄພຊີວິດ, ຫຸ້ນ, ພັນທະບັດ, ໃບແຈ້ງຍອດບັນຊີເບ້ຍບຳນານສຳລັບ:

☐ ເອກະສານກ່ຽວກັບຊັບສິນອື່ນໆໃດໜຶ່ງຢູ່ພາຍໃນ ຫຼື ນອກສະຫະລັດ (United States) (ເຮືອນຫຼັງອື່ນໆ ນອກເໜືອຈາກຫຼັງທີ່ອາໄສຢູ່, ທີ່ດິນ ແລະ ອື່ນໆ) ສຳລັບ:

☐ ການຢືນຢັນວ່າທ່ານໄດ້ຂາຍ, ແລກປ່ຽນ ຫຼື ມອບຊັບສິນແລ້ວ ຫຼື ປິດບັນຊີແລ້ວ ສຳລັບ:

**ຄວາມພິການ/ການຂາດຄວາມສາມາດ**

☐ ໜັງສືແຈ້ງຮັບລາງວັນສຳລັບຄົນພິການຈາກການປະກັນສັງຄົມສຳລັບ:

☐ ຫຼັກຖານອື່ນໆທີ່ສະແດງວ່າທ່ານມີຄວາມພິການທາງຮ່າງກາຍ, ຈິດໃຈ ຫຼື ອາລົມທີ່ຈະເປັນແກ່ຍາວເຖິງ 12 ເດືອນຂຶ້ນໄປ ສຳລັບ:

ຖ້າທ່ານຄິດວ່າທ່ານ ຫຼື ສະມາຊິກໃດໜຶ່ງໃນຄອບຄົວຂອງທ່ານທີ່ໄດ້ຮັບ Medi-Cal ມີຄວາມພິການ ກະລຸນາຕິດຕໍ່ພະນັກງານຂອງທ່ານ.

☐ **ຂໍ້ມູນອື່ນໆທີ່ພວກເຮົາຕ້ອງການ:**